### ແຜນການສອນ
### ບົດຮຽນໂຮງຮຽນວັນອາທິດ
### ວັນອາທິດ ທີ 03 ມີຖຸນາ 2007 ( 06-03-2007 )

---

## ຍອມຮັບການດີ້ນຮົນກັບຄວາມບາບຂອງທ່ານ:

**ຂໍ້ພຣະຄັມພີໃນບົດຮຽນ:** ພຣະບັນຍັດສອງ 1:6-8, 26-33, 42-46

**ຄໍາຖາມແຫ່ງຊີວິດ:** ເປັນຫຍັງບາງຄັ້ງຂ້າພະເຈົ້າຈຶ່ງບໍ່ຮູ້ສຶກມີຄວາມພໍໃຈໃນເຣື່ອງສັມພັນກັບພຣະເຈົ້າ?

**ພຣະຄັມພີແຫ່ງຄວາມຈິງ:** ການບໍ່ຟັງຄວາມພຣະເຈົ້ານັ້ນມີຜົນສະທ້ອນໃນລະຍະສັ້ນ ແລະຍາວ ພ້ອມທັງເຮັດໃຫ້ການດໍາເນີນຊີວິດໃນຄວາມເຊື່ອນັ້ນຈົມລົງ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ຈະຊ່ອຍໃຫ້ທ່ານໄດ້ມີຄວາມສາມັກຄີທັມອັນເລິກເຊິ່ງຕໍ່ພຣະເຈົ້າໂດຍ:

- ຍອມຮັບຕໍ່ພຣະເຈົ້າວ່າ ທ່ານມີຄວາມດີ້ນຮົນກັບຄວາມບາບຂອງທ່ານ ແລະ
- ຮຽນຂໍອະພັຍບາບທີ່ທ່ານໄດ້ກະທໍາຕໍ່ພຣະເຈົ້າ ແລະຂໍການຊ່ອຍເຫລືອຈາກພຣະອົງໃນເຣື່ອງການ ຕ້ານທານຕໍ່ຄວາມບາບນັ້ນ.

#### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນໍາຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນໍາໄປສອນ
4. ອ່ານ "**ແຜນການສອນ**", ຫມາຍບ່ອນສໍາຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສໍາເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈໍານວນນັກຮຽນ

#### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສໍາຣວດຈໍານວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈໍາ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄໍາພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

### ບົດນໍາ:

1. ໃຫ້ເວົ້າເຣື່ອງເວລາຊີວິດຂອງທ່ານຕົກຢູ່ໃນການຄວບຄຸມຂອງບາບ ແລະທ່ານໄດ້ຍອມຮັບເອົາຄວາມສັມພັນກັບພຣະເຈົ້າມາ.
2. ຄວາມບາບເປັນສິ່ງທີ່ກີດຂວາງທຸກຢ່າງໃຫ້ເຫີນຫ່າງຈາກພຣະເຈົ້າ.
3. ຄວາມບາບປິດບັງແຜນການຂອງພຣະເຈົ້າທີ່ມີໄວ້ໃຫ້ພວກເຮົາ.

### 1. ທ່ານໄດ້ໄປບ່ອນທີ່ພຣະເຈົ້ານໍາພາໄປນັ້ນບໍ່?: ( ພຣະບັນຍັດສອງ 1:6-8 )

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະບັນຍັດສອງ 1:6-8

2) ຂຽນ " **ບໍ່, ບໍ່, ຂ້ອຍບໍ່ໄປ** " ໃສ່ກະດານ ແລ້ວອ້າງເຫດຜົນມາວ່າ: ເພາະດ້ວຍເຫດໃດຈຶ່ງບໍ່ໄປ?
3) ໃຫ້ພວກເຮົາຄິດຄືນຫລັງ 10 ປີ 20 ປີ ຫລື 30 ປີວ່າ: ໃນເວລານັ້ນພຣະວິນຍານໄດ້ນຳພາພວກອິສຣາເອນ ຢ່າງໃດ?
4) ທ້າທາຍໃຫ້ນັກຮຽນມີຄວາມສົນໃຈໃນການແນະນຳຂອງພຣະເຈົ້າ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ</u>:** ພຣະບັນຍັດສອງ 1:6-8

1. ທີ່ພັກເຊົາຂອງທ່ານແມ່ນຫຍັງ?
2. ຄັ້ງສຸດທ້າຍທີ່ພຣະເຈົ້າບອກໃຫ້ທ່ານຍ້າຍອອກຈາກທີ່ພັກເຊົາຂອງທ່ານນັ້ນດົນປານໃດແລ້ວ?
3. ຖ້າຊົນຊາດອິສຣາເອນບໍ່ຍ້າຍອອກຈາກຄ້າຍພັກເຊົາຂອງເຂົາ ເຂົາກໍຈະບໍ່ໄປຮອດແຜ່ນດິນທີ່ພຣະເຈົ້າຊົງສັນຍາ ຈະມອບໃຫ້ນັ້ນ, ສິ່ງເຫລົ່ານີ້ໄດ້ສະທ້ອນເຖິງຊີວິດຂອງທ່ານຢ່າງໃດ?

## 2. <u>ທ່ານໄດ້ຖືກຄອບຄຸມຈາກການນ້ອຍເນື້ອຕ່ຳໃຈບໍ່?:</u> (ພຣະບັນຍັດສອງ 1:26-28 )

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ພຣະບັນຍັດສອງ 1:26-28
2) **ສົນທະນາ:** ການຮັບເອົາຄວາມນ້ອຍເນື້ອຕ່ຳໃຈບໍ່ເປັນຄວາມບາບ ແຕ່ການໃຫ້ຄວາມນ້ອຍເນື້ອຕ່ຳໃຈຄວບຄຸມ ຕົວເຮົານັ້ນຈະນຳໄປສູ່ຄວາມບາບໄດ້.
3) **ອະທິບາຍ:** ເງື່ອນໄຂຂອງຊົນຊາດອິສຣາເອນໃນການການຮັບເອົາແຜ່ນດິນແຫ່ງຄຳສັນຍານັ້ນບໍ່ແມ່ນໄປຮັບເອົາ ໂລດ ແຕ່ໄປຕາມທີ່ພຣະເຈົ້າຊົງນຳ. ທີ່ຊົນຊາດອິສຣາເອນວົນວຽນຢູ່ໃນຖິ່ນກັນດານ ແລະເຮັດໃຫ້ເຂົາມີຄວາມ ນ້ອຍເນື້ອຕ່ຳໃຈນັ້ນເພາະ:
   ກ) ເຂົາຈົ່ມວ່າຕໍ່ສູ້ພຣະເຈົ້າ ( ຂໍ້ທີ 27 )
   ຂ) ເຂົາຂາດການປະຕິບັດຕາມສັ່ງຂອງພຣະເຈົ້າ.
   ຄ) ເຂົາໄດ້ຈົ່ມວ່າຊຶ່ງກັນ ແລະກັນ ( ຂໍ້ທີ 28 )
   ງ) ເຂົາເບິ່ງປັນຫາທີ່ເກີດຂຶ້ນກັບເຂົາເປັນທາງລົບຢ່າງດຽວ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u>** ພບຢ 1:26-28

1. ແມ່ນຫຍັງທີ່ເຮັດໃຫ້ພວກເຮົາມີຄວາມນ້ອຍເນື້ອຕ່ຳໃຈ ແລະນຳໄປສູ່ຄວາມບາບໄດ້?
2. ມັນເປັນບັນຫາສະເພາະບຸກຄົນ ຫລືສະພາບແວດລ້ອມທີ່ເຮັດໃຫ້ທ່ານໝົດກຳລັງໃຈ?
3. ຄວາມນ້ອຍເນື້ອຕ່ຳໃຈໝົດຫວັງແມ່ນຄວາມບາບບໍ່?

## 3. <u>ທ່ານໄດ້ວາງໃຈໃນການຊ່ອຍເຫລືອຂອງພຣະເຈົ້າບໍ່?:</u> ( ພບຢ 1:29-33 )

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພບຢ 1:29-33
2) **ຄຳຖາມ:** ຖ້າທ່ານຢາກຍ້າຍເຄື່ອງເຟີນິເຈີ ແມ່ນໃຜທີ່ທ່ານບໍ່ຫາ ? ( ຜູ້ຍິງຮ່າງນ້ອຍພ້ອມທີ່ກຳລັງເຈັບແອອຢູ່ )
3) ນຳພານັກຮຽນຕອບຄຳຖາມທີ່ວ່າ " **ຂ້າພະເຈົ້າແມ່ນໃຜ?** " ແລະຍົກເອົາຕົວຢ່າງຜູ້ທີ່ບໍ່ເຊື່ອໃນພຣະເຈົ້າມາສົນ ທະນາໃຫ້ອີງຕາມພຣະຄັມພີໃນເຣື່ອງ " ຄວາມບາບ " ໃຜຈະສາມາດຊ່ອຍໄດ້?
4) ທ່ານໂມເຊໄດ້ໜູນໃຈຄົນອິສຣາເອນໃຫ້ລະນຶກເຖິງການຊ່ອຍເຫລືອນຳພາຂອງພຣະເຈົ້າໃຫ້ແກ່ເຂົາຢ່າງໃດແດ່?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ</u>:** ພບຢ 1:29-33

1. ແມ່ນຫຍັງທີ່ພຣະເຈົ້າຊົງໃຫ້ເຮັດໃນສມັຍນັ້ນ? ແລະໃນສມັຍນີ້ເດພຣະອົງຍັງໃຫ້ເຮັດຄືສມັຍນັ້ນຢູ່ບໍ່?
2. ທ່ານຮູ້ໄດ້ຢ່າງໃດວ່າພຣະເຈົ້າຍັງຊົງເປັນທີ່ໄວ້ວາງໃຈໄດ້?
3. ພຣະເຈົ້າໄດ້ຊົງປ່ຽນແປງຊີວິດຂອງທ່ານຢ່າງໃດ?

## 4. <u>ທ່ານໄດ້ດື້ດຶງຕໍ່ພຣະບັນຊາຂອງພຣະເຈົ້າບໍ່?</u> ( ພບຢ 1:42-46

1) ຂຽນ "**ບໍ່,ບໍ່, ຂ້າພະເຈົ້າບໍ່ໄປ**" ຄຳນີ້ຍັງມີຢູ່ນຳຊົນຊາດອິສຣາເອນ ແລະຢູ່ນຳພວກເຮົາຢ່າງໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດຄວາມເຫັນ:** (ພບຢ 1:42-46)

1. ເປັນຫຍັງພວກອິສຣາເອນຈຶ່ງຕໍ່ສູ້ໃນຈຸດນີ້?
2. ພຣະເຈົ້າໄດ້ໃຫ້ຊົນຊາດອິສຣາເອນຮັບຄວາມຫຍຸ້ງຍາກຄວາມທໍຣະມານໃນທາງໃດຕໍ່ຄວາມຜິດບາບຂອງເຂົາ?
3. ທ່ານມີຄວາມຫຍຸ້ງຍາກອັນໃດທີ່ຈະຍອມຮັບ ແລະປະຕິບັດຕາມການບັນຊາຂອງພຣະເຈົ້າ?

**ສລູບ:**

1. ພຣະເຈົ້າໄດ້ຊີ້ໃຫ້ພວກເຮົາເຫັນບັນຫາຕ່າງ ໆ ໃນ 4 ຈຸດກ່ຽວກັບຄວາມນ້ອຍເນື້ອຕ່ຳໃຈຂອງພວກເຮົາ ແລະໃຫ້ພວກເຮົາຍອມຮັບແລະພິຈາຣະນາການດື້ນຣົນກັບຄວາມບາບຂອງພວກເຮົາ.

## ບົດຮຽນພຣະຄັມພີແຫ່ງຄວາມຈິງ:

- ພຣະເຈົ້າໃຫ້ຄວາມກະຈ່າງແຈ້ງແກ່ຜູ້ທີ່ເຊື່ອໃນແຜນການນຳພາຂອງພຣະອົງໃນຊີວິດຂອງພວກເຂົາ.
- ຜູ້ທີ່ເຊື່ອທັງຫລາຍບໍ່ຄວນໃຫ້ການນ້ອຍເນື້ອຕ່ຳໃຈຄວບຄຸມໃນການກະທຳຂອງເຂົາເຈົ້າ.
- ຜູ້ທີ່ເຊື່ອທັງຫລາຍສາມາດກຳຈັດຄວາມຢ້ານກົວ ແລະຄວາມອ່ອນເພັຽຂອງຄວາມເຊື່ອໄວ້ວາງໃຈ ໂດຍ ການຮ້ອງຫາພຣະເຈົ້າໃຫ້ຊ່ອຍ ແລະສນັບສນູນ.
- ຍົກບັນຫາການປະຕິບັດຕ່າງ ໆ ໃຫ້ພຣະເຈົ້າຊົງນຳວິນຍານຈິດທີ່ພ່າຍແພ້ແລະຈົມລົງນັ້ນ ໃຫ້ເດີນຕາມທາງແຫ່ງຄວາມເຊື່ອ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ J.H.